EDL-Gen ໄດ້ຮັບລາງວັນ Leading Producer of Electricity for Domestic and Export Distribution Company Laos Awards ປະຈຳປີ 2024 & Most Sustainable Practices in Energy Laos Awards ປະຈຳປີ 2024.



ຕາງໜ້າຈາກ ບໍລິສັດ ຜະລິດ -ໄຟຟ້າລາວ ມະຫາຊົນ “ຜ-ຟຟລ”ເຊິ່ງນຳໂດຍ **ທ່ານ ດາວວຽງ ສຸນັນທະລາດ ຮັກສາການຜູ້ອຳນວຍການໃຫຍ່ ຜ-ຟຟລ** ໄດ້ເຂົ້າຮ່ວມພິທີມອບ-ຮັບລາງວັນ World Business Outlook Award 2024 ເຊິ່ງຈັດຂຶ້ນທີ່ ໂຮງແຮມ Marriott Marquis Queens Park, Bangkok, ປະເທດ ໄທ. ໃນປີນີ້ ຜ-ຟຟລ ໄດ້ສົ່ງຜົນງານ ເຂົ້າປະກວດ ແລະ ໄດ້ຮັບລາງວັນຊະນະເລີດໃນ 2 ສາຂາຄື: Leading Producer of Electricity for Domestic and Export Distribution Company Laos Awards ປະຈຳປີ 2024 ແລະ Most Sustainable Practices in Energy Laos Awards ປະຈຳປີ 2024. ການມອບລາງວັນດັ່ງກ່າວ ຈັດຂຶ້ນໂດຍ World Business Outlook ເຊິ່ງແມ່ນອົງກອນທີ່ບໍ່ຫວັງຜົນກຳໄລທີ່ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະກອບການທີ່ມີຜົນງານດີເດັ່ນ, ການຍ້ອງຍໍຊົມເຊີຍໃນແຕ່ລະສາຂາຂອງທຸລະກິດໃນທົ່ວໂລກ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ